ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:(856-21)520715,ແຟັກ:(856-21)256259

ເລກທີ: 028 /ລອທ

ນະຄອນຫຼວງວຽງຈັນ, 24 MAR 2020

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈຳປີ 2020

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາ ບໍລິຫານ ຄັ້ງທີ 01 ປະຈຳປີ 2020 ຊຶ່ງຈັດຂຶ້ນໃນວັນທີ 24 ມີນາ 2020 ເວລາ 14:00 ໂມງຢູ່ທີ່ໂຮງແຮມ ຄຣາວ ພາຊາ, ຖະໜົນສາມແສນໄທ, ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປ.ລາວ ໂດຍ ມີລາຍລະອຽດດັ່ງລຸ່ມນີ້:

1. ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງ ປະຈຳປີ 2019 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2019 ຈາກບໍລິສັດຜູ້ກວດສອບພາຍນອກ ເພື່ອສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ ຢ່າງເປັນທາງການ.
2. ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020 ເພື່ອເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ.
3. ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນ ທຸລະກິດປະຈຳປີ 2019.
4. ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກ ສະພາບໍລິຫານຂອງບໍລິສັດ ດັ່ງນີ້:

- ປະທານສະພາບໍລິຫານ 1,500,000ກີບ ຕໍ່ຄັ້ງ
- ຮອງປະທານສະພາບໍລິຫານ 1,000,000ກີບ ຕໍ່ຄັ້ງ
- ສະມາຊິກສະພາບໍລະຫານ 1,000,000ກີບ ຕໍ່ຄັ້ງ

5. ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສວໍເທີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດປະຈຳປີ 2020 ໂດຍມີຄ່າບໍລິການບໍ່ເກີນ 41,000 ໂດລາສະຫະລັດ.
6. ຮັບຮອງການກະກຽມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ດັ່ງນີ້:
   - ກຳນົດເອົາວັນທີ 07 ເມສາ 2020 ເປັນວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019.
   - ກຳນົດເອົາວັນທີ 30 ເມສາ 2020 ເປັນວັນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ທີ່ຫ້ອງປະຊຸມຊັ້ນ 8 ຕະຫຼາດຫຼັກຊັບລາວ.
   - ກຳນົດວາລະກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ຄື:
     1. ພິຈາລະນາ ແລະ ຮັບຮອງບົດລາຍງານກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018.
     2. ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2019 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2019.
     3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດປະຈຳປີ 2020.
     4. ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດປະຈຳປີ 2019.
     5. ພິຈາລະນາ ແລະ ອະນຸມັດເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານຂອງບໍລິສັດ.
     6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2020.
     7. ເລື່ອງອື່ນໆ (ຖ້າມີ).

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອະພິສິດ ຣຸຈິກຽດກຳຈອນ